ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະພັດທະນາຊົນນະບົດ
ແລະ ລົບລ້າງຄວາມທຸກຍາກຂັ້ນສູນກາງ
ກອງທຶນຫຼຸດຜ່ອນຄວາມທຸກຍາກ

ເລກທີ 0981/ທລຍ
ນະຄອນຫຼວງວຽງຈັນ, ວັນທີ 02 ຕຸລາ 2014

# ບົດລາຍງານປະຈຳປີ
# ກ່ຽວກັບການຈັດຕັ້ງປະຕິບັດໂຄງການ ທລຍ
# ແຕ່ ຕຸລາ 2013 ຫາ ກັນຍາ 2014

ຄະນະຮັບຜິດຊອບກອງທຶນຫລຸດຜ່ອນຄວາມທຸກຍາກຂັ້ນສູນກາງ

*<u>ກະກຽມໂດຍ</u>: ພະແນກຕິດຕາມ ແລະ ປະເມີນຜົນ*

# <u>ພາກທີ I</u>. ລັກສະນະ ແລະ ຈຸດພິເສດ ຂອງ ໂຄງການ ທລຍ

<u>ເນື້ອໃນຕົ້ນຕໍ</u>:

1. ດ້ານການຈັດຕັ້ງ
2. ໜ້າທີ່ຕົ້ນຕໍ ຂອງ ທລຍ
3. ຈຸດປະສົງ
4. ດ້ານບຸກຄະລາກອນ
5. ໜ້າວຽກຕົ້ນຕໍ ຂອງ ທລຍ (Project components)
6. ແຫຼ່ງທຶນ ແລະ ງົບປະມານສໍາລັບ 5 ປີ (2011-2016)
7. ແບບແຜນການຈັດຕັ້ງປະຕິບັດ

### 1. ດ້ານການຈັດຕັ້ງ

ອີງຕາມດໍາລັດນາຍົກລັດຖະມົນຕີ ເລກທີ 10 ./ນຍ, ລົງວັນທີ 10 ມັງກອນ 2012. ກອງທຶນຫຼຸດຜ່ອນຄວາມທຸກຍາກ ເປັນອົງການຈັດຕັ້ງໜຶ່ງທີ່ມີຄວາມອິດສະຫຼະໃນການຕັດສິນໃຈ ແລະ ດ້ານການເງິນ ເພື່ອບໍລິຫານຄຸ້ມຄອງການຈັດຕັ້ງປະຕິບັດໂຄງການຢູ່ເຂດທຸກຍາກ ແລະ ຫ່າງໄກສອກຫຼີກ 278 ກຸ່ມບ້ານ, 42 ເມືອງທຸກຍາກ ແລະ 10 ແຂວງ ຢູ່ ສປປ ລາວ (ລາຍລະອຽດຢູ່ເອກະສານຄັດຕິດ).

ທຸກການຈັດຕັ້ງປະຕິບັດ ຂອງ ທລຍ ແມ່ນຢູ່ພາຍໃຕ້ການຕິດຕາມ ແລະ ປະເມີນຜົນຂອງສະພາບໍລິຫານ ທລຍ ໂດຍຜ່ານກອງປະຊຸມສະພາບໍລິຫານ ທລຍ ປະຈໍາປີ ແລະ ຜ່ານການລາຍງານຜົນການຈັດຕັ້ງປະຕິບັດວຽກງານໃນແຕ່ລະໄລຍະຂອງ ທລຍ ຕໍ່ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ.

### 2. ໜ້າທີ່ຕົ້ນຕໍ ຂອງ ທລຍ

ໜ້າທີ່ຕົ້ນຕໍ ຂອງ ທລຍ ຄື <u>ອໍານວຍຄວາມສະດວກທັງທາງດ້ານວິຊາການ ແລະ ການເງິນ ໃຫ້ແກ່ບັນດາບ້ານເປົ້າໝາຍຂອງໂຄງການ</u> ເພື່ອໃຫ້ພໍ່ແມ່ປະຊາຊົນພາຍໃນບ້ານສາມາດສ້າງ ແລະ ຈັດຕັ້ງປະຕິບັດແຜນພັດທະນາບ້ານສໍາລັບ 5 ປີ ຂອງຕົນໃຫ້ບັນລຸຜົນສໍາເລັດ.

### 3. ຈຸດປະສົງ

ຈຸດປະສົງຕົ້ນຕໍແມ່ນ ປັບປຸງເງື່ອນໄຂຊີວິດການເປັນຢູ່ (ໂດຍສະເພາະດ້ານພື້ນຖານໂຄງລ່າງ) ຂອງບັນດາບ້ານເປົ້າໝາຍໃຫ້ດີຂຶ້ນໂດຍຜ່ານຂະບວນການຄວາມເປັນເຈົ້າຕົນເອງຂອງພໍ່ແມ່ປະຊາຊົນ (Community Driven Development ຫຼື CDD) ທັງນີ້ ກໍເພື່ອໃຫ້ເຂົາເຈົ້າ ໄດ້ເຂົ້າເຖິງ ແລະ ນໍາໃຊ້ການບໍລິການຕ່າງໆໃຫ້ຫຼາຍຂຶ້ນ ແລະ ມີຄວາມຍືນຍົງ.

ທລຍ ຍັງມີຈຸດປະສົງຕົ້ນຕໍເພື່ອຜັນຂະຫຍາຍ *ແຜນຍຸດທະສາດແຫ່ງຊາດເພື່ອການຈະເລີນເຕີບໂຕ ແລະ ລຶບລ້າງຄວາມທຸກຍາກ ຢູ່ ສປປ ລາວ* ແລະ ຜັນຂະຫຍາຍ *ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 7* ເຂົ້າສູ່ພາກປະຕິບັດຕົວຈິງ.

**4. ດ້ານບຸກຄະລາກອນ**

ຮອດເດືອນ ກັນຍາ 2014, ທລຍ ມີພະນັກງານທັງໝົດ 307 ຄົນ (ຍິງ 93 ຄົນ). ໃນນັ້ນ ປະຈຳຢູ່ຂັ້ນສູນກາງ 42 ຄົນ (ຍິງ 17 ຄົນ), ປະຈຳຢູ່ຫ້ອງການ ທລຍ ຂັ້ນແຂວງ 80 ຄົນ (ຍິງ 19 ຄົນ) ປະຈຳຢູ່ຫ້ອງການ ທລຍ ຂັ້ນເມືອງ ແລະ 185 ຄົນ (ຍິງ 57 ຄົນ).

ນອກຈາກນີ້, ຍັງໄດ້ຮັບເອົາອາສາສະມັກຢູ່ຂັ້ນກຸ່ມບ້ານ (ຜູ້ອຳນວຍຄວາມສະດວກຂັ້ນບ້ານ) ຈຳນວນ 624 ຄົນ (ຍິງ 241 ຄົນ ຫຼື 38,60%) ເພື່ອເປັນຜູ້ປະສານງານລະຫວ່າງ ທລຍ ກັບ ພໍ່ແມ່ປະຊາຊົນຢູ່ບ້ານເປົ້າໝາຍ ຂອງ ໂຄງການ.

**5. ໜ້າວຽກຕົ້ນຕໍ ຂອງ ທລຍ (Project components) ລວມມີ:**

- ວຽກພັດທະນາຊຸມຊົນ ເຊິ່ງລວມມີ 2 ກິດຈະກຳໃຫຍ່ຄື: ສ້າງແຜນພັດທະນາຊຸມຊົນ ແລະ ພັດທະນາພື້ນຖານໂຄງລ່າງ.
- ວຽກສ້າງຄວາມເຂັ້ມແຂງໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນ.
- ວຽກບໍລິຫານໂຄງການ.

**6. ແຫຼ່ງທຶນ ແລະ ງົບປະມານສຳລັບ 5 ປີ (2011-2016)**

ແຫຼ່ງທຶນຕົ້ນຕໍ ຂອງ ທລຍ ແມ່ນໄດ້ມາຈາກ ທຶນສົມທົບຂອງລັດຖະບານເອົາ ແລະ ບັນດາຜູ້ໃຫ້ທຶນ (ຕາຕະລາງ 01) ເຊິ່ງລວມມູນຄາທັງໝົດ 65.700.000 ໂດລາສະຫະລັດ ສຳລັບ 5 ປີ (2011-2016) ໃນນັ້ນ, 72% ແມ່ນໃຊ້ເພື່ອການລົງທຶນ ແລະ 28% ເພື່ອຄ່າໃຊ້ຈ່າຍດ້ານບໍລິຫານ ລວມທັງການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນ.

**ຕາຕະລາງ 01. ແຫຼ່ງທຶນ ແລະ ງົບປະມານ 5 ປີ ຂອງ ທລຍ**

| **ແຫຼ່ງທຶນ** | (ລ້ານ ໂດລາສະຫະລັດ) |
|---|---|
| ລັດຖະບານແຫ່ງ ສປປ ລາວ | *10* |
| ອົງການຈັດຕັ້ງເພື່ອການພັດທະນາລະຫວ່າງປະເທດ (International Development Association) | *25* |
| ອົງການເພື່ອການພັດທະນາ ແລະ ການຮ່ວມມື ແຫ່ງປະເທດສະວິດຊີແລນ (Switzerland: Swiss Agency for Development and Cooperation (SDC)) | *13,2* |
| ກອງທຶນສາກົນເພື່ອຫຼຸດຜ່ອນຄວາມທຸກຍາກ (Poverty Reduction Fund Support Facility Trust Fund) | *17,5* |
| **Total** | 65,7 |

<u>ແຫຼ່ງຂໍ້ມູນ:</u> ພະແນກການເງິນ ແລະ ບໍລິຫານ, ທລຍ, 31 ທັນວາ 2013

**7. ແບບແຜນການຈັດຕັ້ງປະຕິບັດ**

ໃນໄລຍະ 2 ປີຜ່ານມານີ້ (2011-2013) ທລຍ ໄດ້ສືບຕໍ່ນຳໃຊ້ຫຼັກການ "ການພັດທະນາທີ່ປະຊາຊົນກຳນົດຄວາມຕ້ອງການດ້ວຍຕົນເອງ (ຫຼື ສ້າງ ແລະ ຈັດຕັ້ງປະຕິບັດແຜນພັດທະນາບ້ານສຳລັບ 5 ປີ ດ້ວຍຕົນເອງ), ທຸກຂັ້ນຕອນຂອງການຈັດຕັ້ງປະຕິບັດໂຄງການແມ່ນປະຕິບັດໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນເອງ". ໝາຍວ່າ ປະຊາຊົນ ໄດ້ເຂົ້າຮ່ວມທຸກຂັ້ນຕອນ ຄືເລີ່ມແຕ່ "ຂັ້ນຕອນກຳນົດຄວາມຕ້ອງການຂອງບ້ານ" ຈົນຮອດ "ຂັ້ນຕອນການຈັດຕັ້ງປະຕິບັດ ແລະ ບົວລະບັດຮັກສາຄຸ້ມຄອງໂຄງການຍ່ອຍທີ່ກໍ່ສ້າງສຳເລັດ ແລະ ກຳລັງຖືກນຳໃຊ້". ທລຍ ແມ່ນມີບົດບາດເປັນພຽງ "ຜູ້ອຳນວຍຄວາມສະດວກ" ເທົ່ານັ້ນ ໂດຍບໍ່ມີບົດບາດໄປແຊກແຊງການຕັດສິນໃຈຂອງພໍ່ແມ່ປະຊາຊົນ.

ສິ່ງສຳຄັນ, ຂະບວນການຈັດຕັ້ງປະຕິບັດໂຄງການ ຂອງ ທລຍ ແມ່ນຕ້ອງໄດ້ຜ່ານບັນດາຂັ້ນຕອນສຳຄັນດັ່ງນີ້: ຂະບວນການວາງແຜນພັດທະນາຂັ້ນບ້ານ, ຂະບວນການວາງແຜນພັດທະນາຂັ້ນກຸ່ມບ້ານ, ກອງປະຊຸມປະສານງານວາງແຜນຂັ້ນເມືອງ, ການສຳລວດ-ອອກແບບໂຄງການຍ່ອຍ, ຈັດຊື້-ຈັດຈ້າງ, ຈັດຕັ້ງປະຕິບັດ ແລະ ຂັ້ນຕອນຕິດຕາມປະເມີນຜົນ.

ພ້ອມນີ້, ທຸກຂັ້ນຕອນການຈັດຕັ້ງປະຕິບັດໂຄງການ ໄດ້ດຳເນີນໄປພາຍໃຕ້ 6 ຫຼັກການຄື:

(1) ເຮັດແຕ່ງ່າຍຫາຍາກ;

(2) ຊຸມຊົນເຂົ້າຮ່ວມທຸກຂັ້ນຕອນ ແລະ ສົ່ງເສີມຄວາມສະເໝີພາບດ້ານບົດບາດຍິງ-ຊາຍ;

(3) ມີຄວາມໂປ່ງໃສ ແລະ ກວດສອບໄດ້;

(4) ຢູ່ຄຽງຂ້າງຜູ້ທຸກຍາກ;

(5) ລົງທຶນຕ້ອງຄຸ້ມຄ່າ; ແລະ

(6) ທຸກໂຄງການຕ້ອງມີຄວາມຍືນຍົງ.

# <u>ພາກທີ II</u>. ຜົນສຳເລັດຂອງການຈັດຕັ້ງປະຕິບັດໂຄງການ

<u>ເນື້ອໃນຕົ້ນຕໍ</u>:

1. ໂຄງການພັດທະນາຊຸມຊົນຢູ່ເຂດຊົນນະບົດ, ທຸກຍາກ ແລະ ຫ່າງໄກສອກຫຼີກ ຂອງ ທລຍ 2.

   *1). ວຽກສ້າງແຜນພັດທະນາບ້ານ ສຳລັບ 5 ປີ (2011-2016)*
   *2). ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ 989ໂຄງການ*
   *3). ຜູ້ໄດ້ຮັບຜົນປະໂຫຍດ*
   *4). ດ້ານບໍລິຫານການເງິນ*
   *5). ຜົນການຈັດຕັ້ງປະຕິບັດໂຄງການໃນລະດັບຍຸດທະສາດ*
   *6). ສະພາບການຈັດຕັ້ງປະຕິບັດບັນດາໂຄງການຍ່ອຍພາຍໃຕ້ທຶນ ສົມທົບ ຂອງ ລັດຖະບານ*

2. ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພຊະນາການ

   *1). ລັກສະນະ ແລະ ຈຸດພິເສດ ຂອງ ໂຄງການ*
   *2). ຜົນສຳເລັດໃນການຈັດຕັ້ງປະຕິບັດໂຄງການສຳລັບ 6 ເດືອນຕົ້ນປີ 2014*

3. ສັງເກດຕີລາຄາດ້ານດີ ແລະ ດ້ານອ່ອນ

ມາຮອດປະຈຸບັນ (ກັນຍາ 2014) ກອງທຶນຫຼຸດຜ່ອນຄວາມທຸກຍາກ ໄດ້ສຸມໃສ່ບໍລິຫານ-ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດບັນດາກິດຈະກຳທີ່ຢູ່ພາຍໃຕ້ 2 ໂຄງການໃຫຍ່ຄື: **(1). ໂຄງການພັດທະນາຊຸມຊົນຢູ່ເຂດຊົນນະບົດ, ທຸກຍາກ ແລະ ຫ່າງໄກສອກຫຼີກ ຂອງ ທລຍ 2, ແລະ (2).** ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພຊະນາການ.

## 1. ໂຄງການພັດທະນາຊຸມຊົນຢູ່ເຂດຊົນນະບົດ, ທຸກຍາກ ແລະ ຫ່າງໄກສອກຫຼີກ ຂອງ ທລຍ 2.

ໂດຍລວມແລ້ວ, ການຈັດຕັ້ງປະຕິບັດໂຄງການ ທລຍ ໄລຍະ 2 ນັບແຕ່ເດືອນ ຕຸລາ 2013 ເຖິງເດືອນ ກັນຍາ 2014 ມານີ້ ທລຍ ສາມາດຍາດໄດ້ຜົນສຳເລັດຫຼາຍດ້ານຕາມເປົ້າໝາຍທີ່ກຳນົດໄວ້ ຄື:

### *1.1. ຜົນສຳເລັດດ້ານການຈັດຕັ້ງປະຕິບັດໂຄງການ*

**1). ວຽກສ້າງແຜນພັດທະນາບ້ານ ສຳລັບ 5 ປີ (2011-2016)**

- ມາຮອດປະຈຸບັນ, ມີປະມານ 1.952 ບ້ານ ສາມາດສ້າງແຜນພັດທະນາບ້ານສຳລັບ 5 ປີ (2011-2016) ຂອງຕົນ ໄດ້ສຳເລັດ ເຊິ່ງຢູ່ໃນແຜນດັ່ງກ່າວ ລວມມີໂຄງການຍ່ອຍທັງໝົດ 36.409 ໂຄງ ການ. ທັງໝົດໂຄງການເລົ່ານີ້ ແມ່ນພໍ່ແມ່ປະຊາຊົນເປັນຜູ້ກຳນົດເອງ ພາຍຫຼັງຜ່ານຂະບວນການປຶກສາຫາລືກັນ, ສຶກສາຄົ້ນຄວ້າສະພາບຄວາມທຸກຍາກທີ່ແທ້ຈິງຂອງບ້ານ ແລະ ມາດຕະການແກ້ໄຂ.

- ມີ 278 ກຸ່ມບ້ານ ທີ່ສາມາດສ້າງແຜນພັດທະນາກຸ່ມບ້ານສໍາລັບ 5 ປີ (2011-2016) ຂອງ ຕົນໄດ້ສໍາເລັດ ເຊິ່ງຢູ່ໃນແຜນດັ່ງກ່າວ ລວມມີໂຄງການຍ່ອຍທັງໝົດ 18.485 ໂຄງການ.
- ເນື່ອງຈາກວ່າ ທລຍ ມີງົບປະມານຈໍາກັດ, 3 ປີຜ່ານມານີ້ ທລຍ ຈຶ່ງໄດ້ສະໜັບສະໜູນພຽງ 989 ໂຄງການ ທີ່ມີເງື່ອນໄຂແທດເໝາະກັບງົບປະມານປະຈໍາປີ ຂອງ ທລຍ. ສ່ວນທີ່ເຫຼືອແມ່ນຈະພິຈາລະນາເຂົ້າໃນແຜນງົບປະມານປີຕໍ່ໄປ ຂອງ ທລຍ.
- ອັນພົ້ນເດັ່ນກໍຄື ມີຈໍານວນ 279 ໂຄງການຍ່ອຍ ຂອງ ແຜນພັດທະນາກຸ່ມບ້ານ ໄດ້ຖືກຈັດຕັ້ງປະຕິບັດໂດຍພໍ່ອຍງານລັດ ແລະ ອົງການພັດທະນາອື່ນໆ ທີ່ກໍາລັງໃຫ້ການຊ່ວຍເຫຼືອຢູ່ບ້ານເປົ້າໝາຍ ຂອງ ທລຍ.

**2). ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ 989 ໂຄງການ ຂອງ ທລຍ**

**ກ. ຮອບວຽນ 9 (ສົກປີ 2011-2012)**

ພາຍໃຕ້ງົບປະມານສົກປີ 2011-2012, ທລຍ ໄດ້ຕິດຕາມ ແລະ ຄຸ້ມຄອງ 262 ໂຄງການຍ່ອຍ ຄິດເປັນມູນຄ່າ 61.276.341.313 ກີບ (ຫຼື 7.659.543 ໂດລາສະຫະລັດ).

- ໂຄງການຍ່ອຍທີ່ຈັດຕັ້ງປະຕິບັດສໍາເລັດແລະພໍ່ແມ່ປະຊາຊົນໄດ້ນໍາໃຊ້ແລ້ວ ມີຈໍານວນທັງໝົດ 257 ໂຄງການ ຫຼື 98% ຂອງຈໍານວນໂຄງການທັງໝົດ 262 ໂຄງການ.
- ເຖິງຢ່າງໃດກໍດີ, ມີ 1 ໂຄງການ ທີ່ມີຄວາມຄືບໜ້າໃນການຈັດຕັ້ງປະຕິບັດຫຼາຍກວ່າ 50%. 3 ໂຄງການ ມີຄວາມຄືບໜ້າປະມານ 50% ແລະ 1 ໂຄງການ ພວມຢູ່ໃນຂັ້ນຕອນກະກຽມການກໍ່ສ້າງ (ຕາຕະລາງ 2.1-2.2).

**ຕາຕະລາງ 2.1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການ ຮອບວຽນ 9 (ສົກປີ 2011-2012) ຕາມຂະແໜງການ**

| ຂະແໜງການ | ຄວາມຄືບໜ້າ (%) | | | | ລວມ |
|---|---|---|---|---|---|
| | 0% | <50% | >50% | 100% | |
| ກະສິກໍາ | | | | 19 | 19 |
| ສຶກສາ | | 1 | | 72 | 73 |
| ດຶງຕະຂ່າຍໄຟຟ້າ | | | | 3 | 3 |
| ສາທາລະນະສຸກ | 1 | 2 | 1 | 118 | 122 |
| ຄົມມະນາຄົມ | | | | 45 | 45 |
| **ລວມ** | **1** | **3** | **1** | **257** | **262** |

ແຫຼ່ງຂໍ້ມູນ: ພະແນກຕິດຕາມ ແລະ ປະເມີນຜົນ, ທລຍ, ກັນຍາ 2014

ຕາຕະລາງ 2.2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການ ຮອບວຽນ 9 (ສົກປີ 2011-2012) ຕາມແຂວງ

| ຂະແໜງການ | ຄວາມຄືບໜ້າ (%) | | | | ລວມ |
|---|---|---|---|---|---|
| | 0% | <50% | >50% | 100% | |
| ອັດຕະປື | | 2 | 1 | 14 | **17** |
| ທິວພັນ | | | | 107 | **107** |
| ຫຼວງນ້ຳທາ | | 1 | | 25 | **26** |
| ສາລະວັນ | | | | 14 | **14** |
| ສະຫວັນນະເຂດ | | | | 41 | **41** |
| ເຊກອງ | 1 | | | 24 | **25** |
| ຊຽງຂວາງ | | | | 32 | **32** |
| **ລວມ** | **1** | **3** | **1** | **257** | **262** |

<u>ແຫຼ່ງຂໍ້ມູນ:</u> ພະແນກຕິດຕາມ ແລະ ປະເມີນຜົນ, ທລຍ, ກັນຍາ 2014

ໃນຈຳນວນ 5 ໂຄງການທີ່ຍັງບໍ່ທັນຈັດຕັ້ງປະຕິບັດສຳເລັດນັ້ນ ມີ 1 ໂຄງການຢູ່ບ້ານດອນທິບ, ເມືອງນາແລ, ແຂວງຫຼວງນ້ຳທາ ໄດ້ຖືກຍົກເລີກຍ້ອນວ່າໄດ້ຮັບຜົນກະທົບຈາກໂຄງການສ້າງເຂື່ອນໄຟຟ້າ ເຊິ່ງຕ້ອງມີການຍົກຍ້າຍບ້ານໄປແຫ່ງໃໝ່. ສຳລັບ 4 ໂຄງການທີ່ມີການຈັດຕັ້ງປະຕິບັດຊັກຊ້ານັ້ນ ຍ້ອນວ່າໂຄງການຕັ້ງຢູ່ບ້ານທີ່ຫ່າງໄກສອກຫຼີກ ແລະ ການຄົມມະນາຄົມຫຍຸ້ງຍາກ ໂດຍສະເພາະ ແມ່ນສາມາດສັນຈອນໄປ-ມາ ໄດ້ພຽງລະດູດຽວ.

## ຂ. <u>ຮອບວຽນ 10 (ສົກປີ 2012-2013)</u>

ພາຍໃຕ້ງົບປະມານສົກປີ 2012-2013, ທລຍ ໄດ້ຕິດຕາມ ແລະ ຄຸ້ມຄອງ 393 ໂຄງການຍ່ອຍ ຄິດເປັນມູນຄ່າ 78.951.384.888 ກີບ (ຫຼື 9.868.923 ໂດລາສະຫະລັດ).

- ໂຄງການຍ່ອຍທີ່ຈັດຕັ້ງປະຕິບັດສຳເລັດ ແລະ ພໍ່ແມ່ປະຊາຊົນໄດ້ນຳໃຊ້ແລ້ວ ມີຈຳນວນທັງໝົດ 386 ໂຄງການ ຫຼື 98% ຂອງຈຳນວນໂຄງການທັງໝົດ 393 ໂຄງການ.
- ເຖິງຢ່າງໃດກໍດີ, ມີ 1 ໂຄງການ ທີ່ມີຄວາມຄືບໜ້າໃນການຈັດຕັ້ງປະຕິບັດຫຼາຍກວ່າ 50% ແລະ ອີກ 1 ໂຄງການ ມີຄວາມຄືບໜ້າປະມານ 50% (ຕາຕະລາງ 3.1 ແລະ 3.2).

ຕາຕະລາງ 3.1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການ ຮອບວຽນ10 (ສົກປີ 2012-2013) ຕາມຂະແໜງການ

| ຂະແໜງການ | ຄວາມຄືບໜ້າ (%) | | | | ລວມ |
|---|---|---|---|---|---|
| | 0% | <50% | >50% | 100% | |
| ກະສິກຳ | | | | 18 | 18 |
| ສຶກສາ | | | 1 | 92 | 94 |
| ດຶງຕະຂ່າຍໄຟຟ້າ | | | | 7 | 7 |
| ສາທາລະນະສຸກ | | | | 167 | 167 |
| ຄົມມະນາຄົມ | | 1 | | 106 | 107 |
| ລວມ | 0 | 1 | 1 | 391 | 393 |

ແຫຼ່ງຂໍ້ມູນ: ພະແນກຕິດຕາມ ແລະ ປະເມີນຜົນ, ທລຍ, ກັນຍາ 2014

ຕາຕະລາງ 3.2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການ ຮອບວຽນ10 (ສົກປີ 2012-2013) ຕາມແຂວງ

| ແຂວງ | ຄວາມຄືບໜ້າ (%) | | | | ລວມ |
|---|---|---|---|---|---|
| | 0 | <50% | >50% | 100% | |
| ອັດຕະປື | | | | 20 | 20 |
| ຫົວພັນ | | | | 89 | 89 |
| ຫຼວງນ້ຳທາ | | 1 | | 28 | 29 |
| ຫຼວງພະບາງ | | | 1 | 43 | 44 |
| ອຸດົມໄຊ | | | | 54 | 54 |
| ຜົ້ງສາລີ | | | | 25 | 25 |
| ສາລະວັນ | | | | 19 | 19 |
| ສະຫວັນນະເຂດ | | | | 56 | 56 |
| ເຊກອງ | | | | 23 | 23 |
| ຊຽງຂວາງ | | | | 34 | 34 |
| ລວມ | 0 | 1 | 1 | 391 | 393 |

ແຫຼ່ງຂໍ້ມູນ: ພະແນກຕິດຕາມ ແລະ ປະເມີນຜົນ, ທລຍ, ກັນຍາ 2014

ຂ. ຮອບວຽນ 11 (ສົກປີ 2013-2014)

ພາຍໃຕ້ງົບປະມານສົກປີ 2013-2014, ທລຍ ໄດ້ຕິດຕາມ ແລະ ຄຸ້ມຄອງ 333 ໂຄງການຍ່ອຍ ຄິດເປັນມູນຄ່າ 79.395.110.165 ກີບ (ຫຼື 9.924.382 ໂດລາສະຫະລັດ).

- ໂຄງການຍ່ອຍທີ່ຈັດຕັ້ງປະຕິບັດສຳເລັດ ແລະ ພໍ່ແມ່ປະຊາຊົນໄດ້ນຳໃຊ້ແລ້ວ ມີຈຳນວນທັງໝົດ 172 ໂຄງການ ຫຼື 51% ຂອງຈຳນວນໂຄງການທັງໝົດ 333 ໂຄງການ.

- ເຖິງຢ່າງໃດກໍດີ, ມີ 122 ໂຄງການ ທີ່ມີຄວາມຄືບໜ້າໃນການຈັດຕັ້ງປະຕິບັດຫຼາຍກວ່າ 50%. 30 ໂຄງການ ມີຄວາມຄືບໜ້າປະມານ 50% ແລະ 10 ໂຄງການ ພວມຢູ່ໃນລະຫວ່າງກະກຽມຈັດຕັ້ງປະຕິບັດ (ຕາຕະລາງ 4.1ແລະ 4.2).

**ຕາຕະລາງ 4.1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການ ຮອບວຽນ 11 (ສົກປີ 2013-2014) ຕາມຂະແໜງການ**

| ຂະແໜງການ | ຄວາມຄືບໜ້າ (%) | | | | ລວມ |
|---|---|---|---|---|---|
| | 0% | <50% | >50% | 100% | |
| ກະສິກຳ | 2 | 2 | 7 | 28 | 39 |
| ສຶກສາ | 4 | 10 | 54 | 46 | **114** |
| ດຶງຕະຂ່າຍໄຟຟ້າ | 0 | 5 | 2 | 1 | **8** |
| ສາທາລະນະສຸກ | 2 | 9 | 41 | 64 | **116** |
| ຄົມມະນາຄົມ | 2 | 4 | 13 | 37 | **56** |
| **ລວມ** | **10** | **30** | **117** | **176** | **333** |

<u>ແຫຼ່ງຂໍ້ມູນ:</u> ພະແນກຕິດຕາມ ແລະ ປະເມີນຜົນ, ທລຍ, ກັນຍາ 2014

**ຕາຕະລາງ 4.2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການ ຮອບວຽນ 11 (ສົກປີ 2013-2014) ຕາມແຂວງ**

| ຂະແໜງການ | ຄວາມຄືບໜ້າ (%) | | | | ລວມ |
|---|---|---|---|---|---|
| | 0% | <50% | >50% | 100% | |
| ອັດຕະປື | 3 | 6 | 5 | 4 | **18** |
| ຫົວພັນ | | 2 | 20 | 47 | **69** |
| ຫຼວງພະບາງ | 2 | 4 | 22 | 15 | **43** |
| ຫຼວງນ້ຳທາ | | | 5 | 11 | **16** |
| ອຸດົມໄຊ | | | 19 | 35 | **54** |
| ຜົ້ງສາລີ | 3 | 1 | 10 | 9 | **23** |
| ສາລະວັນ | 1 | 7 | 6 | 2 | **16** |
| ສະຫວັນນະເຂດ | 1 | 8 | 17 | 19 | **45** |
| ເຊກອງ | | 2 | 9 | 9 | **20** |
| ຊຽງຂວາງ | | | 4 | 25 | **29** |
| **ລວມ** | **10** | **30** | **117** | **176** | **333** |

<u>ແຫຼ່ງຂໍ້ມູນ:</u> ພະແນກຕິດຕາມ ແລະ ປະເມີນຜົນ, ທລຍ, ກັນຍາ 2014

3). ຜູ້ໄດ້ຮັບຜົນປະໂຫຍດຈາກ 989 ໂຄງການ ຂອງ ທລຍ ແບ່ງຕາມຂະແໜງການ

ຕາຕະລາງ 3.1. ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ ຂອງ ຮອບວຽນ 9 (2011-2012)

| ຂະແໜງການ | ພົນລະເມືອງ ທັງໝົດ | ຍິງ | ຊົນເຜົ່າ | ລາວ | ຄົວເຮືອນທຸກຍາກ |
|---|---|---|---|---|---|
| | | | | | |
| ນ້ຳລິນ ແລະ ນ້ຳລ້າງ | 48.527 | 24.057 | 39.794 | 8.733 | 5.126 |
| ສຶກສາ | 33.431 | 16.431 | 30.084 | 3.347 | 2.900 |
| ໂຍທາທິການ | 16.519 | 8.404 | 11.962 | 4.557 | 1.583 |
| ສາທາລະນະສຸກ | 5.683 | 3.033 | 5.683 | - | 5.683 |
| ກະສິກຳ | 8.468 | 4.213 | 7.500 | 968 | 618 |
| ຕະຂ່າຍໄຟຟ້າຊຸມຊົນ | 2.721 | 1.393 | 2.507 | 214 | 171 |
| | | | | | |
| **ລວມ** | **115.349** | **57.531** (50%) | **97.530** (85%) | **17.819** (15%) | **10.975** |

ແຫຼ່ງຂໍ້ມູນ: ພະແນກຕິດຕາມ ແລະ ປະເມີນຜົນ, ທລຍ, 31 ທັນວາ 2013

ຕາຕະລາງ 3.2. ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ ຂອງ ຮອບວຽນ 10 (2012-2013)

| ຂະແໜງການ | ພົນລະເມືອງທັງໝົດ | ຍິງ | ຊົນເຜົ່າ | | ລາວ | ຄົວເຮືອນທຸກຍາກ |
|---|---|---|---|---|---|---|
| | | | | | | |
| ນ້ຳລິນ ແລະ ນ້ຳສ້າງ | 77.956 | 37.015 | 70.001 | | 7.955 | 7.299 |
| ສຶກສາ | 43.899 | 21.498 | 32.524 | | 11.375 | 3.360 |
| ໂຍທາທິການ | 48.991 | 24.677 | 44.337 | | 4.654 | 4.521 |
| ສາທາລະນະສຸກ | 10.011 | 4.969 | 9.556 | | 455 | 963 |
| ກະສິກຳ | 7.496 | 3.696 | 5.994 | | 1.502 | 621 |
| ຕະຂ່າຍໄຟຟ້າຊຸມຊົນ | 5.128 | 2.656 | 4.814 | | 314 | 514 |
| | | | | | | |
| ລວມ | **193.481** | **94.511 (49%)** | **167.226 (86%)** | | **26.255 (14%)** | **17.278** |

ແຫຼ່ງຂໍ້ມູນ: ພະແນກຕິດຕາມ ແລະ ປະເມີນຜົນ, ທລຍ, 31 ທັນວາ 2013

ຕາຕະລາງ 3.3. ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ ຂອງ ຮອບວຽນ 11 (2013-2014)

| ຂະແໜງການ | ຜູ້ໄດ້ຮັບຜົນປະໂຫຍດ | | | | | |
|---|---|---|---|---|---|---|
| | ຈ/ນ ບ້ານ | ພົນລະເມືອງລວມ | ຍິງ | ຜູ້ທຸກ | ເດັກນ້ອຍຕ່ຳກວ່າ 15 | ຊົນເຜົ່າ |
| | | | | | | |
| ກະສິກຳ | 39 | 18.934 | 9.431 | 7.052 | 6.111 | 13.366 |
| ສຶກສາ | 114 | 61.586 | 29.764 | 19.129 | 22.465 | 50.813 |
| ດຶງຕະຂ່າຍໄຟຟ້າ | 8 | 2.731 | 1.345 | 984 | 793 | 2.731 |
| ສາທາລະນະສຸກ | 116 | 58.228 | 28.756 | 21.019 | 21.628 | 48.338 |
| ຄົມມະນາຄົມ-ຂົນສົ່ງ | 56 | 24.382 | 11.908 | 9.445 | 8.225 | 22.334 |
| **ລວມ** | **333[1]** | **165.861** | **81.204** | **57.629** | **59.222** | **137.582** |

<u>ແຫຼ່ງຂໍ້ມູນ:</u> ພະແນກຕິດຕາມ ແລະ ປະເມີນຜົນ, ທລຍ, ກັນຍາ 2014

ຕາລະລາງ 3.1, 3.2 ແລະ 3.3 ນອກຈາກໄດ້ຊີ້ໃຫ້ເຫັນຢ່າງຈະແຈ້ງວ່າ ຈຳນວນຜູ້ໄດ້ຮັບຜົນປະໂຫຍດທັງໝົດ ແມ່ນມີຈຳນວນເພີ່ມຂຶ້ນເກືອບເທົ່າຕົວ ຈາກ 115.349 ຄົນ (ຍິງ 57.531 ຄົນ, ຊົນເຜົ່າ 97.530 ຄົນ ແລະ 10.975 ຄົວເຮືອນ) ໃນສົກປີ 2011-2012 ມາເປັນ 193.481 ຄົນ (ຍິງ 95.511 ຄົນ, ຊົນເຜົ່າ 167.226 ຄົນ ແລະ 17.278 ຄົວເຮືອນ), ຍັງຊີ້ໃຫ້ເຫັນອີກວ່າ ໂຄງການ ທລຍ ໄດ້ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງພໍ່ແມ່ປະຊາຊົນທີ່ເປັນຊົນເຜົ່າ, ຜູ້ດ້ອຍໂອກາດ ແລະ ອາໃສຢູ່ເຂດຫ່າງໄກສອກຫຼີກເປັນສ່ວນຫຼາຍ ເຊິ່ງມີຈຳນວນກວາມເຖິງ 86% ຂອງ ຈຳນວນຜູ້ໄດ້ຮັບຜົນປະໂຫຍດທັງໝົດ.

ພ້ອມນີ້ ໂຄງການກ່ຽວກັບການແກ້ໄຂ "ການຂາດເຂີນນ້ຳດື່ມ-ນ້ຳໃຊ້" ນັ້ນ ແມ່ນມີຈຳນວນຫຼາຍກວ່າໂຄງການປະເພດອື່ນໆ. ມາຮອດປະຈຸບັນ ທລຍ ຍັງສັງເກດເຫັນວ່າ ໂຄງການກໍ່ສ້າງລະບົບນ້ຳລິນຊຸມຊົນ ແລະ ນ້ຳສ້າງ ຍັງເປັນຄວາມຮຽກຕ້ອງການອັນຮີບດ່ວນອັນດັບໜຶ່ງ ຂອງ ພໍ່ແມ່ປະຊາຊົນທີ່ອາໃສຢູ່ເຂດທຸກຍາກ ແລະ ຫ່າງໄກສອກຫຼີກຢູ່ ຍ້ອນວ່າ ແຫຼ່ງນ້ຳທີ່ສະອາດ ແລະ ມີພຽງພໍຕະຫຼອດລະດູການນັ້ນ ສ່ວນຫຼາຍແມ່ນມີໄລຍະຫ່າງໄກຈາກບ້ານ ປະມານ 6 ຫາ 8 ກິໂລແມັດ. ສະນັ້ນ, ປະຊາຊົນສ່ວນຫຼາຍ ຈຶ່ງເລືອກເອົາໂຄງການກໍ່ສ້າງລະບົບນ້ຳລິນ ເປັນຄວາມຕ້ອງບູລິມະສິດຂອງເຂົາເຈົ້າໃນການພັດທະນາ ແລະ ແກ້ໄຂຄວາມທຸກຍາກຂອງບ້ານ.

**ໂຄງການ ທລຍ ໄດ້ບັນລຸເປົ້າໝາຍ ຂອງ ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂອງ ລັດຖະບານເຮົາ ຄືແນວໃດ?**

[1] ຖ້ານັບຕາມຈຳນວນໂຄງການແມ່ນ 333 ໂຄງການ ແຕ່ຕາມສັນຍາແມ່ນ 334 ສັນຍາ ເພາະມີສອງສັນຍາກ່ຽວກັບການສະໜອງອຸປະກອນການສຶກສາ ຢູ່ບ້ານຈະວຶກ, ກຸ່ມບ້ານຈະວຶກ, ເມືອງລະມາມ ແຂວງເຊກອງ.

ໂດຍອີງໃສ່ຜົນສຳຫຼວດຂໍ້ມູນເບື້ອງຕົ້ນ (baseline survey) ກ່ຽວກັບການພັດທະນາ ແລະ ລຶບຄວາມທຸກຍາກໃນປີ 2011 ຂອງ ຄະນະພັດທະນາພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກນັ້ນ[2] ທລຍ ໄດ້ເຂົ້າໄປພັດທະນາຫຼາຍພື້ນທີ່ແລ້ວ ເຊິ່ງລາຍລະອຽດເບິ່ງຕາຕະລາງ 3.3.

**ຕາຕະລາງ 3.3. ຈຳນວນພື້ນທີ່ ທີ່ ທລຍ ເຂົ້າໄປພັດທະນາ ໂດຍອີງຕາດຳລັດ 285/ນຍ**

| | **ເຂດທຸກຍາກ ທີ່ອີງຕາມດຳລັດ 285 ຂອງ ນາຍົກ (ປີ 2011)*** | **ພື້ນທີ່ທີ່ ທລຍ ໄດ້ເຂົ້າໄປຊ່ວຍເຫຼືອ** |
|---|---|---|
| ແຂວງທຸກຍາກ | 16 | 10 |
| ເມືອງທຸກຍາກ | 106 | 42 |
| ບ້ານທຸກຍາກ | 3.175 | 1.951 |

ແຫຼ່ງຂໍ້ມູນ: ພະແນກຕິດຕາມ ແລະ ປະເມີນຜົນ, ທລຍ, ກັນຍາ 2014

**4). ດ້ານບໍລິຫານການເງິນ**

ອີງຕາມຕາຕະລາງ4 ເຖິງ 6 ຈະສັງເກດເຫັນວ່າ ແຂວງຫົວພັນ, ສະຫວັນນະເຂດ ແລະ ອຸດົມໄຊ ໄດ້ຮັບງົບປະມານຫຼາຍກວ່າໝູ່ ເນື່ອງຈາກວ່າ 3 ແຂວງດັ່ງກ່າວ ມີຜູ້ທຸກຍາກ ແລະ ບ້ານທຸກຍາກຫ່າງໄກສອກຫຼີກຫຼາຍກວ່າແຂວງອື່ນໆ.

**ຕາຕະລາງ 4. ງົບປະມານ ແລະ ການເບີກຈ່າຍເພື່ອຈັດຕັ້ງປະຕິບັດໂຄງການຍ່ອຍ (2011-2012) ແບ່ງຕາມແຂວງ**

| ແຂວງ | ຈ.ນ ໂຄງການ | ງົບປະມານ | | ຈຳນວນໂອນໃຫ້ແຂວງ (ກີບ) | ຈຳນວນຄ້າງໂອນ (ກີບ) |
|---|---|---|---|---|---|
| | | ໂດລາສະຫະລັດ | ກີບ | | |
| ຫົວພັນ | 107 | 2.031.705,355 | 16.253.642.837 | 16.253.642.837 | 0 |
| ສະຫວັນນະເຂດ | 41 | 1.825.179,68 | 14.601.437.437 | 14.051.622.657 | 549.814.780 |
| ຊຽງຂວາງ | 32 | 1.144.095,36 | 9.152.762.880 | 9.152.762.880 | 0 |
| ສາລະວັນ | 14 | 567.381,6175 | 4.539.052.940 | 4.539.052.940 | 0 |
| ຫຼວງນ້ຳທາ | 26 | 617.069,9563 | 4.936.559.650 | 4.936.559.650 | 0 |
| ເຊກອງ | 25 | 937.762,7746 | 7.502.102.197 | 7.384.566.948 | 117.535.249 |
| ອັດຕະປື | 17 | 530.576,9073 | 4.244.615.258 | 3.098.049.280 | 1.146.565.978 |
| **ລວມ** | **262** | **7.653.771,65** | **61.230.173.199** | **59.416.257.192** | **1.813.916.007** |

ແຫຼ່ງຂໍ້ມູນ: ພະແນກການເງິນ ແລະ ບໍລິຫານ, ທລຍ, ສິງຫາ 2014

[2] ການສຳຫຼວດ ແມ່ນອີງໃສ່ດຳລັດນາຍົກລັດຖະມົນຕີ ເລກທີ 285/ນຍ ເພື່ອສຳຫຼວດການພັດທະນາ ແລະ ລຶບລ້າງຄວາມທຸກຍາກໃນຂອບເຂດທົ່ວປະເທດໃນປີ 2011.

### ຕາຕະລາງ 5. ງົບປະມານ ແລະ ການເບີກຈ່າຍເພື່ອຈັດຕັ້ງປະຕິບັດໂຄງການຍ່ອຍ (2012-2013) ແບ່ງຕາມແຂວງ

| ແຂວງ | ຈ/ນ ໂຄງການ | ງົບປະມານ | | ຈຳນວນໂອນໃຫ້ແຂວງ (ກີບ) | ຈຳນວນຄ້າງໂອນ (ກີບ) |
|---|---|---|---|---|---|
| | | ໂດລາສະຫະລັດ | ກີບ | | |
| ຫົວພັນ | 89 | 1.866.616 | 14.932.931.936 | 14.864.902.523 | 68.029.413 |
| ສະຫວັນນະເຂດ | 56 | 1.368.513,651 | 10.948.109.206 | 10.534.735.238 | 413.373.968 |
| ຊຽງຂວາງ | 34 | 951.590,555 | 7.612.724.440 | 7.612.724.440 | 0 |
| ສາລະວັນ | 19 | 578.929,504 | 4631436032 | 4.573.209.025 | 58.227.007 |
| ຫຼວງນ້ຳທາ | 29 | 471.445,9913 | 377.1567.930 | 3.722.401.405 | 49.166.525 |
| ເຊກອງ | 23 | 652.663,0685 | 5.221.304.548 | 4.854.898.415 | 366.406.133 |
| ອັດຕະປື | 20 | 534.243,8804 | 4.273.951.043 | 3.951.309.107 | 322.641.936 |
| ຜົ້ງສາລີ | 25 | 670.437,6218 | 5.363.500.974 | 5.107.128.026 | 256.372.948 |
| ອຸດົມໄຊ | 54 | 1.580.140,283 | 12.641.122.260 | 12.603.267.874 | 37.854.386 |
| ຫຼວງພະບາງ | 44 | 1.194.342,065 | 9.554.736.519 | 8.740.805.976 | 813.930.543 |
| **ລວມ** | **393** | **9.868.923,11** | **78.951.384.888** | **76.565.382.029** | **2.386.002.859** |

ແຫຼ່ງຂໍ້ມູນ: ພະແນກການເງິນ ແລະ ບໍລິຫານ, ທລຍ, ສິງຫາ 2014

### ຕາຕະລາງ 6. ງົບປະມານ ແລະ ການເບີກຈ່າຍເພື່ອຈັດຕັ້ງປະຕິບັດໂຄງການຍ່ອຍ (2013-2014) ແບ່ງຕາມແຂວງ

| ແຂວງ | ຈ/ນ ໂຄງການ | ງົບປະມານ | | ຈຳນວນໂອນໃຫ້ແຂວງ (ກີບ) | ຈຳນວນຄ້າງໂອນ (ກີບ) |
|---|---|---|---|---|---|
| | | ໂດລາສະຫະລັດ | ກີບ | | |
| ຫົວພັນ | 69 | 1.760.003,11 | 14.080.024.881 | 4.784.216.128 | 9.295.808.753 |
| ສະຫວັນນະເຂດ | 45 | 1.412.226,155 | 11.297.809.236 | 3.356.662.465 | 7.941.146.771 |
| ຊຽງຂວາງ | 29 | 845.870,5951 | 6.766.964.761 | 3.161.560.774 | 3.605.403.987 |
| ສາລະວັນ | 16 | 512.814,1929 | 4.102.513.543 | 573.531.467 | 3.528.982.076 |
| ຫຼວງນ້ຳທາ | 16 | 445.273,6229 | 3.562.188.983 | 1.742.680.071 | 1.819.508.912 |
| ເຊກອງ | 20 | 672.228,9536 | 5.377.831.629 | 3.116.913.054 | 2.260.918.575 |
| ອັດຕະປື | 18 | 529.688,489 | 4.237.507.912 | 958.221.225 | 3.279.286.687 |
| ຜົ້ງສາລີ | 23 | 618.719,3868 | 4.949.755.094 | 1.904.057.484 | 3.045.697.610 |
| ອຸດົມໄຊ | 54 | 1.648.364,904 | 13.186.919.228 | 7.721.285.050 | 5.465.634.178 |
| ຫຼວງພະບາງ | 43 | 1.266.655,727 | 10.133.245.819 | 5.128.283.129 | 5.004.962.690 |
| **ລວມ** | **333** | **9.711.845,136** | **77.694.761.086** | **32.447.410.847** | **45.247.350.239** |

ແຫຼ່ງຂໍ້ມູນ: ພະແນກການເງິນ ແລະ ບໍລິຫານ, ທລຍ, ສິງຫາ 2014

## 5). ສະພາບການຈັດຕັ້ງປະຕິບັດ ບັນດາໂຄງການຍ່ອຍ ພາຍໃຕ້ທຶນສົມທົບຂອງລັດຖະບານ

### 5.1). ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ແລະ ຜົນກະທົບດ້ານດີຂອງໂຄງການ

ມາຮອດເດືອນວັນທີ 10 ກັນຍາ 2014, ໂຄງການພາຍໃຕ້ທຶນຂອງລັດຖະບານມີທັງໝົດ 149 ໂຄງການ. ໃນນັ້ນ, ສົກປີ 2012-2013 (ຮອບວຽນ10) ມີຈຳນວນທັງໝົດ 86 ໂຄງການ ເຊິ່ງຄິດເປັນມູນຄ່າປະມານ 15.859.189.437 ກີບ (ຫຼື 1.982.399 ໂດລາສະຫະລັດ) ແລະ ສົກປີ 2013-2014 ມີທັງໝົດ 63 ໂຄງການ ເຊິ່ງຄິດເປັນມູນຄ່າທັງໝົດ 15.382.296.633 ກີບ (ຫຼື 1.922.787,079 ໂດລາສະຫະລັດ).

ສິ່ງສຳຄັນກວ່າໝູ່ໝົດ, ໃນສົກປີ 2012-2013 ໂຄງການສ່ວນຫຼາຍ ແມ່ນຕັ້ງຢູ່ບ້ານທີ່ທຸກຍາກທີ່ສຸດ ແລະ ທຸກປານກາງ ຄື 29 ແລະ 47 ໂຄງການຕາມລຳດັບ (ຕາຕະລາງ 7). ພ້ອມດຽວກັນນີ້ ກໍຍັງສັງເກດເຫັນວ່າ ປະມານ 48 ບ້ານ ຫຼື 56% ຂອງ ຈຳນວນບ້ານເປົ້າໝາຍທັງໝົດ (86 ບ້ານ) ໄດ້ເລືອກເອົາໂຄງການກໍ່ສ້າງລະບົບນ້ຳລິນ, ນ້ຳບາດານ ແລະ ນ້ຳສ້າງ ເປັນບູລະມະສິດທຳອິດຂອງຄວາມຕ້ອງການເພື່ອແກ້ໄຂຄວາມທຸກຍາກພາຍໃນບ້ານ. ອັນທີ່ຈິງແລ້ວ, ບັນຫາການເຂົ້າບໍ່ເຖິງແຫຼ່ງນ້ຳດື່ມນ້ຳໃຊ້ ແມ່ນບັນຫາຄວາມທຸກຍາກອັນຕົ້ນຕໍ ຂອງພໍ່ແມ່ປະຊາຊົນເຮົາ ທີ່ມັກພົບເຫັນໃນທຸກພື້ນທີ່ເປົ້າໝາຍຂອງໂຄງການ ທລຍ. ຢູ່ຫຼາຍບ້ານ, ພໍ່ແມ່ປະຊາຊົນ ຕ້ອງໃຊ້ເວລາປະມານ ເຄິ່ງ ຫຼື 1 ມື້ ຈຶ່ງໄປເຖິງແຫຼ່ງນ້ຳທີ່ຫາງໄກຈາກບ້ານປະມານ 5-8 ກິໂລແມັດ ເພື່ອນຳມາໃຊ້ເຂົ້າໃນການດຳລົງຊີວິດປະຈຳວັນຂອງເຂົາເຈົ້າ. ສະນັ້ນ, ມັນໄດ້ສິ່ງຜົນກະທົບດ້ານລົບໂດຍກົງ ຕໍ່ການສ້າງຖານະເສດຖະກິດຂອງຄອບຄົວທຸກຍາກຢູ່ໃນພື້ນທີ່ດັ່ງກ່າວ. ໝາຍວ່າ ເຂົາເຈົ້າ ຕ້ອງຢຸດເຊົາກິດຈະກຳອື່ນໆທັງໝົດ ລວມທັງກິດຈະກຳສ້າງລາຍຮັບເພື່ອໄປຊອກຫາແຫຼ່ງນ້ຳພຽງຢ່າງດຽວ.

**ຕາຕະລາງ 7. ທີ່ຕັ້ງຂອງໂຄງການແບ່ງຕາມຂະແໜງການ (ທຶນລັດຖະບານ ສົກປີ 2012-2013)**

| ປະພດໂຄງການ | ບັນດາບ້ານທຸກຍາກ | ບັນດາບ້ານທຸກປານກາງ | ບັນດາບ້ານຂ້ອນຂ້າງທຸກ | ລວມ |
|---|---|---|---|---|
| ກະສິກຳ | | 6 | | 6 |
| ສຶກສາ | 2 | 12 | 1 | 15 |
| ຕະຂ່າຍໄຟຟ້າຊຸມຊົນ | | 2 | | 2 |
| ສາທາລະນະສຸກ | 3 | 43 | 6 | 52 |
| ຄົມມະນາຄົມ ແລະ ຂົນສົ່ງ | 3 | 8 | | 11 |
| **ລວມ** | **8** | **71** | **7** | 86 |

| ແຂວງ | ບັນດາບ້ານທຸກຍາກ | ບັນດາບ້ານທຸກປານກາງ | ບັນດາບ້ານຂ້ອນຂ້າງທຸກ | ລວມ | ຜູ້ໄດ້ຮັບຜົນປະໂຫຍດ | | | | |
|---|---|---|---|---|---|---|---|---|---|
| | | | | | ຈ/ນ ທັງໝົດ | ຍິງ | ຜູ້ທຸກ | ເດັກນ້ອຍຕ່ຳກວ່າ 15 ປີ | ຊົນເຜົ່າ |
| ອັດຕະປື | | 4 | 2 | 6 | 5.503 | 2.811 | 1.508 | 2.123 | 3.211 |
| ທີວພັນ | 3 | 17 | 1 | **21** | 6.538 | 3.269 | 3.051 | 2.478 | 5.488 |
| ຫຼວງນ້ຳທາ | | 17 | 1 | **18** | 6.730 | 3.418 | 1.612 | 2.007 | 6.721 |
| ສາລະວັນ | 3 | 1 | 2 | **6** | 3.815 | 1.962 | 1.506 | 795 | 3.814 |
| ສະຫວັນນະເຂດ | 2 | 14 | 1 | **17** | 7.793 | 3.899 | 3.762 | 2.733 | 7.719 |
| ເຊກອງ | 2 | 4 | | **6** | 2.504 | 1.143 | 654 | 788 | 2.376 |
| ຊຽງຂວາງ | | 12 | | **12** | 5.474 | 2.696 | 799 | 2.370 | 4.237 |
| **ລວມ** | **10** | **69** | **7** | **86** | **38.357** | **19.198** | **12.892** | **13.294** | **33.566** |

ແຫຼ່ງຂໍ້ມູນ: ພະແນກຕິດຕາມ ແລະ ປະເມີນຜົນ, ທລຍ, ສິງຫາ 2014

ມາຮອດປະຈຸບັນ, ການຈັດຕັ້ງປະຕິບັດແມ່ນສຳເລັດແລ້ວ 85 ໂຄງການ ຫຼື 99% ຂອງ ຈຳນວນທັງໝົດ. ອີກ 1 ໂຄງການກໍ່ສ້າງຂົວຢູ່ບ້ານສະແກນ, ກຸ່ມສະແກນ, ເມືອງນາແລ, ແຂວງຫຼວງນ້ຳທາ ແມ່ນມີຄວາມຄືບໜ້າໄປແລ້ວ 43% (ຕາຕະລາງ 8). ໂຄງການນີ້ມີຄວາມຊັກຊ້າ ຍ້ອນວ່າເປັນໂຄງການຮ່ວມທຶນ ແລະ ວິຊາການ ກັບ ອົງການ ຣາວິຕັດລາວ. ສະນັ້ນ, ອຸປະກອນກໍ່ສ້າງຕ້ອງນຳເຂົ້າຈາກຕ່າງປະເທດເກືອບທັງໝົດ ເຊິ່ງກໍ່ໃຊ້ເວລາພໍສົມຄວນ.

**ຕາຕະລາງ 8. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຂອງແຕ່ລະແຂວງເປົ້າໝາຍ (ທຶນລັດຖະບານປີ 2012-2013)**

| ແຂວງ | <50% | >50% | 100% | ລວມ | ງົບປະມານ (ກີບ) |
|---|---|---|---|---|---|
| ຫຼວງນ້ຳທາ | 1 | 0 | 17 | 18 | 2.230.475.545 |
| ທີວພັນ | 0 | 0 | 21 | 21 | 3.435.606.906 |
| ຊຽງຂວາງ | 0 | 0 | 12 | 12 | 2.479.572.741 |
| ສະຫວັນນະເຂດ | 0 | 0 | 17 | 17 | 3.594.620.800 |
| ສາລະວັນ | 0 | 0 | 6 | 6 | 1.396.550.003 |
| ເຊກອງ | 0 | 0 | 6 | 6 | 1.287.409.526 |
| ອັດຕະປື | 0 | 0 | 6 | 6 | 1.434.953.916 |
| **ລວມ** | **1** | **0** | **85** | **86** | **15.859.189.437** |

ແຫຼ່ງຂໍ້ມູນ: ພະແນກບໍລິຫານການເງິນ ທລຍ, ສິງຫາ 2014

*ໝາຍເຫດ: ງົບປະມານທີ່ຍັງເຫລືອຈຳນວນ 140,810,563 ກີບ ແມ່ນຮັກສາໄວ້ຢູ່ບັນຊີຄັງເງິນແຫ່ງຊາດຂັ້ນສູນກາງ*

ໃນສົກປີ 2013-2014, ໂຄງການພາຍໃຕ້ທຶນສົມທົບລັດຖະບານເຮົາ ມີທັງໝົດ 63 ໂຄງການ. ໂຄງການສ່ວນຫຼາຍ ແມ່ນຕັ້ງຢູ່ບ້ານທຸກປານກາງ ເຊິ່ງມີທັງ 49 ໂຄງການ ຂອງ ຈຳນວນທັງໝົດ. ແຂວງທີ່ໄດ້ຮັບໂຄງການຫຼາຍກວ່າແຂວງອື່ນໆ ແມ່ນແຂວງຫົວພັນ ເຊິ່ງມີທັງໝົດ 20 ໂຄງການ ຂອງຈຳນວນທັງໝົດ (ຕາຕະລາງ 9 ແລະ 10)

**ຕາຕະລາງ 9: ໂຄງການແບ່ງຕາມຂະແໜງການ (ທຶນສົມທົບລັດຖະບານ ສົກປີ 2013-2014)**

| ປະເພດໂຄງການ | ບັນດາບ້ານທຸກຍາກ | ບັນດາບ້ານທຸກປານກາງ | ບັນດາບ້ານຂ້ອນຂ້າງທຸກ | ລວມ |
|---|---|---|---|---|
| ກະສິກຳ | | 8 | | 8 |
| ສຶກສາ | 5 | 25 | 2 | 32 |
| ສາທາລະນະສຸກ | 4 | 13 | 3 | 20 |
| ຄົມມະນາຄົມ ແລະ ຂົນສົ່ງ | | 3 | | 3 |
| **ລວມ** | **9** | **49** | **5** | **63** |

ແຫຼ່ງຂໍ້ມູນ: ພະແນກຕິດຕາມ ແລະ ປະເມີນຜົນ, ທລຍ, ສິງຫາ 2014

**ຕາຕະລາງ 10: ໂຄງການແບ່ງຕາມແຂວງ (ທຶນສົມທົບລັດຖະບານ ສົກປີ 2013-2014)**

| ແຂວງ | ບັນດາບ້ານທຸກຍາກ | ບັນດາບ້ານທຸກປານກາງ | ບັນດາບ້ານຂ້ອນຂ້າງທຸກ | ລວມ | ຜູ້ໄດ້ຮັບຜົນປະໂຫຍດ | | | | |
|---|---|---|---|---|---|---|---|---|---|
| | | | | | ຈ/ນ ທັງໝົດ | ຍິງ | ຜູ້ທຸກ | ເດັກນ້ອຍຕໍ່າກວ່າ 15 ປີ | ຊົນເຜົ່າ |
| ອັດຕະປື | 2 | 3 | 2 | 7 | 5.401 | 2.744 | 865 | 2.436 | 5.106 |
| ຫົວພັນ | 3 | 17 | | 20 | 10.789 | 5.329 | 5.555 | 4.194 | 5.364 |
| ສາລະວັນ | 1 | 4 | | 5 | 2555 | 1275 | 1019 | 775 | 1.585 |
| ສະຫວັນນະເຂດ | 3 | 10 | 3 | 16 | 8.825 | 4.277 | 3.608 | 2.964 | 8.369 |
| ຊຽງຂວາງ | | 15 | | 15 | 8.431 | 3.991 | 892 | 2.453 | |
| **ລວມ** | **9** | **49** | **5** | **63** | **36.001** | **17.616** | **11.939** | **12.822** | **20.424** |

ແຫຼ່ງຂໍ້ມູນ: ພະແນກຕິດຕາມ ແລະ ປະເມີນຜົນ, ທລຍ, ສິງຫາ 2014

ຮອດວັນທີ 30 ກັນຍາ 2014, ໂຄງການທີ່ຈັດຕັ້ງສຳເລັດ ແລະ ພໍ່ແມ່ປະຊາຊົນ ໄດ້ນຳໃຊ້ແລ້ວ ມີທັງໝົດ 31 ໂຄງການ. ຈຳນວນທີ່ເຫຼືອ ພວມຢູ່ໃນຂັ້ນຕອນຈັດຕັ້ງປະຕິບັດ ຄື: ຄວາມຄືບໜ້າຫຼາຍກວ່າ 50% ມີ 11 ໂຄງການ, ປະມານ 50% ມີ 18 ໂຄງການ ແລະ ຕໍ່າກວ່າ 50% ມີ 3 ໂຄງການ (ຕາຕະລາງ11).

ຕາຕະລາງ 11. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຂອງແຕ່ລະແຂວງເປົ້າໝາຍ (ທຶນສົມທົບລັດຖະບານປີ 2013-2014)

| ແຂວງ | 0% | <50% | >50% | 100% | ລວມ |
|---|---|---|---|---|---|
| ຫົວພັນ | | 2 | 6 | 12 | 20 |
| ຊຽງຂວາງ | | 2 | | 13 | 15 |
| ສະຫວັນນະເຂດ | | 10 | 1 | 5 | 16 |
| ສາລະວັນ | 2 | | 2 | 1 | 5 |
| ອັດຕະປື | 1 | 4 | 2 | | 7 |
| **ລວມ** | **3** | **18** | **11** | **31** | **63** |

ແຫຼ່ງຂໍ້ມູນ: ພະແນກຕິດຕາມ ແລະ ປະເມີນຜົນ, ທລຍ, ສິງຫາ 2014

### 5.2). ຄວາມຄືບໜ້າໃນດ້ານບໍລິຫານຄຸ້ມຄອງການເງິນຂອງໂຄງການຍ່ອຍພາຍໃຕ້ທຶນສົມທົບຂອງລັດຖະບານ

ອີງຕາມຕາຕະລາງ12, ປະຈຸບັນ ງົບປະມານໂຄງການຍ່ອຍຮອບວຽນ10 (ສົກປີ 2012-2013) ແມ່ນໄດ້ໂອນໃຫ້ແຂວງໝົດແລ້ວ ພາຍຫຼັງໄດ້ຮັບທຶນສົມທົບຈາກລັດຖະບານເຮົາ ໃນວັນທີ 1 ເມສາ 2014.

ສໍາລັບງົບປະມານສົກປີ 2013-2014 ນັ້ນ ກົມງົບປະມານ ກະຊວງການເງິນ ກໍາລັງກວດກາຄວາມຖືກຕ້ອງຂອງເອກະສານ ເພື່ອອະນຸມັດງົບປະມານໃນຂັ້ນຕໍ່ໄປ (ຕາຕະລາງ 12).

ຕາຕະລາງ 12. ງົບປະມານ ແລະ ການເບີກຈ່າຍ

| ຮອບວຽນ | ຈ/ນ ໂຄງການ | ງົບປະມານ | | ຈໍານວນໂອນໃຫ້ ແຂວງ (ກີບ) | ຈໍານວນຄ້າງໂອນ (ກີບ) |
|---|---|---|---|---|---|
| | | ໂດລາສະຫະລັດ | ກີບ | | |
| ຮອບວຽນ 10 | 86 | 1.982.398,680 | 15.859.189.437 | 15.859.189.437 | 0 |
| ຮອບວຽນ 11 | 63 | 1.922.787,079 | 15.382.296.633 | 0 | 15.382.296.633 |

ແຫຼ່ງຂໍ້ມູນ: ພະແນກຕິດຕາມ ແລະ ປະເມີນຜົນ, ທລຍ, ສິງຫາ 2014

## 2. ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພຊະນາການ

1). ລັກສະນະ ແລະ ຈຸດພິເສດ ຂອງ ໂຄງການ

ໂຄງການປັບປຸງຊີວິດການເປັນເພື່ອຄໍ້າປະກັນດ້ານໂພຊະນາການ ເປັນໂຄງການທົດລອງ ຂອງ ທລຍ ທີ່ເນັ້ນໃສ່ "ຍົກສູງລາຍຮັບ" ຂອງຄົວເຮືອນທຸກຍາກ ແລະ ດ້ອຍໂອກາດ ຈໍານວນທັງໝົດ 28.800 ຄົວເຮືອນ ຢູ່ 4 ເມືອງທຸກຍາກ ຂອງ ແຂວງຫົວພັນ (ເມືອງຊຽງຄໍ້, ຊໍາໃຕ້, ຊ່ອນ ແລະ ຮ້ຽມ) ແລະ 2 ເມືອງທຸກຍາກ ຂອງ ສະຫວັນນະເຂດ (ເມືອງເຊໂປນ ແລະ ນອງ) ໂດຍຜ່ານກິດຈະກໍາສ້າງລາຍຮັບຂອງ "ກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ" ເປັນຕົ້ນຕໍ. ໂຄງການດັ່ງກ່າວ ໄດ້ຮັບທຶນຊ່ວຍເຫຼືອຈາກ ກອງທຶນ

ເພື່ອການພັດທະນາສັງຄົມ ຈາກປະເທດຍີ່ປຸ່ນ (Japan's Social Development Fund (JSDF)) ຈຳນວນ 2.621.500 ໂດລາສະຫະລັດ ເພື່ອຈັດຕັ້ງປະຕິບັດໂຄງການແຕ່ປີ 2012 – 2016.

ໂຄງການນີ້ ປະກອບດ້ວຍ 3 ພາກສ່ວນຫຼັກ ຄື:

- ສ້າງຕັ້ງກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາຜູ້ສະໜອງການບໍລິການຢູ່ທ້ອງຖິ່ນ.
- ສະໜອງທຶນໃຫ້ແກ່ຊຸມຊົນ ເພື່ອສ້າງກິດຈະກຳສ້າງລາຍຮັບ ແລະ ຍົກສູງຊີວິດການເປັນຢູ່.
- ສ້າງກິດຈະກຳປັບປຸງດ້ານໂພຊະນາການ.

2). ຜົນສຳເລັດໃນການຈັດຕັ້ງປະຕິບັດໂຄງການສຳລັບ 6 ເດືອນຕົ້ນປີ 2014

*2.1). ຜົນການຈັດຕັ້ງປະຕິບັດກິດຈະກຳ*

- ມາຮອດປະຈຸບັນ, ໂຄງການສາມາດສ້າງຕັ້ງກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໄດ້ຈຳນວນທັງໝົດ 158 ກຸ່ມ. ໃນນັ້ນ, 24 ກຸ່ມ ແມ່ນໄດ້ສຳເລັດການສ້າງແຜນການລົງທຶນ ຂອງຄົວເຮືອນ (ຫຼື ສະມາຊິກຂອງກຸ່ມ), ແຜນການລົງທຶນຂອງກຸ່ມ ແລະ ໄດ້ຮັບທຶນສະໜັບສະໜູນຈາກໂຄງການແລ້ວ ເພື່ອຈັດຕັ້ງປະຕິບັດແຜນການລົງທຶນຂອງເຂົາເຈົ້າ (ຕາຕະລາງ 7, 8 ແລະ 9). ອີກ 134 ກຸ່ມ ແມ່ນກຳລັງຢູ່ໃນໄລຍະ ຂອງ ຂັ້ນຕອນການປະເມີນຄວາມເຂັ້ມແຂງຂອງກຸ່ມ. ຖ້າຫາກຜ່ານການປະເມີນແລ້ວ, ທັງໝົດ ຈະໄດ້ເຂົ້າຮ່ວມໃນຂັ້ນຕອນ "ການສ້າງແຜນການລົງທຶນຂອງຄົວເຮືອນ, ແຜນກຸ່ມ ແລະ ຈັດຕັ້ງປະຕິບັດແຜນການ" ຕາມລຳດັບ.
- ຈຳນວນແມ່ຍິງທີ່ເປັນສະມາຊິກຂອງກຸ່ມ ມີຈຳນວນເພີ່ມຂຶ້ນຈາກ 46,4% ມາເປັນ 78% ຂອງຈຳນວນທັງໝົດ.
- ມາຮອດປະຈຸບັນ, ໂຄງການ ສຳເລັດສ້າງ "ສູນໂພຊະນາການຂັ້ນບ້ານ" ຈຳນວນທັງໝົດ 6 ສູນ ເຊິ່ງມີສະມາຊິກທັງໝົດ 118 ຄົນ (ຕາຕະລາງ 13).

**ຕາຕະລາງ 13. ຈຳນວນກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນທັງໝົດ**

| ເມືອງ | ຈ/ນ ບ້ານ | ຈ/ນ ກຸ່ມ | ຈ/ນ ສະມາຊິກ ຂອງ ກຸ່ມ | | | |
|---|---|---|---|---|---|---|
| | | | ຊາຍ | ຍິງ | ຊາຍ (%) | ຍິງ (%) |
| | | | | | | |
| ເຊໂປນ | 18 | 61 | 221 | 639 | 26 | 74 |
| ວຽງທອງ* | 26 | 97 | 1.454 | 918 | 61 | 39 |
| | | | | | | |
| **ລວມ** | **44** | **158** | **1.675** | **1.557** | **52** | **48** |

*<u>ແຫຼ່ງຂໍ້ມູນ</u>: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພຊະນາການ, ຫລຍ, ກັນຍາ 2014*

** ປະຈຸບັນ, ເມືອງ ວຽງທອງ ໄດ້ແບ່ງອອກເປັນ ເມືອງຊ່ອນ ແລະ ເມືອງຮ້ຽມ ຕາມດຳລັດ ເລກທີ 338/ນຍ, ລົງວັນທີ 5 ທັນວາ 2013*

**ຕາຕະລາງ14. ກຸ່ມທີ່ຜ່ານການປະເມີນ ຂອງ ໂຄງການ**

| ເມືອງ | ບ້ານ | ກິດຈະກຳຫຼັກ ຂອງ ກຸ່ມ | ຈ/ນ ກຸ່ມ | ຈ/ນ ສະມາຊິກ | | | ຈ/ນ ເງິນທ້ອນ (ກີບ) | ທຶນຊ່ວຍເຫຼືອຈາກ ໂຄງການ |
|---|---|---|---|---|---|---|---|---|
| | | | | ຊາຍ | ຍິງ | ລວມ | | |
| | | | | | | | | |
| ເຊໂປນ | ສະແກງ | ປູກສາລີ, ໝາກເຜັດ, ລ້ຽງປາ, ລ້ຽງໄກ່ | 7 | 36 | 46 | 82 | 9.657.000 | 90.011.500 |
| | ແກ້ງກອີ | ກິດຈະກຳຕໍ່າແຜ່ນແພ | 3 | 0 | 38 | 38 | 3.069.000 | 30.242.000 |
| ວຽງທອງ* | ແທນທົ່ງ | ລ້ຽງໄກ່ ແລະ ໝູ, ຕໍ່າແຜ່ນແພ | 3 | 29 | 23 | 52 | 3.534.000 | 54.115.000 |
| | ຫ້ວຍສາ | ລ້ຽງປາ, ໄກ່ ແລະ ໝູ | 3 | 20 | 12 | 32 | 2.261.000 | 33.563.000 |
| | ດອນຄູນ | ລ້ຽງແບ້, ໝູ ແລະ ໄກ່, ຕໍ່າແຜ່ນແພ | 4 | 53 | 27 | 80 | 10.325.000 | 82.874.000 |
| | ສາກົກ | ລ້ຽງປາ ແລະ ໄກ່, ຕໍ່າແຜ່ນແພ | 4 | 48 | 22 | 70 | 7.720.000 | 71.671.000 |
| | | | | | | | | |
| **ລວມ** | | | **24** | **186** | **168** | **354** | **36.566.000** | **362.476.500** |
| **ສະເລັ່ຍ ຕໍ່ ບ້ານ** | | | **4** | **31** | **28** | **59** | **6.094.333** | **60.412.750** |
| **ສະເລັ່ຍ ຕໍ່ ກຸ່ມ** | | | | **8** | **7** | **15** | **1.523.583** | **15.103.188** |

*<u>ແຫຼ່ງຂໍ້ມູນ</u>: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພຊະນາການ, ທລຍ, ກັນຍາ 2014*

** ປະຈຸບັນ, ເມືອງ ວຽງທອງ ໄດ້ແບ່ງອອກເປັນ ເມືອງຊ່ອນ ແລະ ເມືອງຮ້ຽມ ຕາມດຳລັດ ເລກທີ 338/ນຍ, ລົງວັນທີ 5 ທັນວາ 2013*

**ຕາຕະລາງ 15. ຈຳນວນກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທີ່ຢູ່ໃນໄລຍະຂອງຂັ້ນຕອນປະເມີນ**

| ແຂວງ | ກຸ່ມບ້ານ | ຈ/ນ ບ້ານ | ຈ/ນ ກຸ່ມ | ຈ/ນ ສະມາຊິກ | | | ຈ/ນເງິນທ້ອນ (ກີບ) |
|---|---|---|---|---|---|---|---|
| | | | | ຍິງ | ຊາຍ | ລວມ | |
| ສະຫວັນນະເຂດ | ໄຊຕອນ | 5 | 14 | 52 | 149 | 201 | 4.634.000 |
| | ມັນຈີ | 4 | 12 | 35 | 119 | 154 | 3.262.000 |
| | ແກ້ງທອງ | 4 | 11 | 36 | 133 | 169 | 4.296.000 |
| | ລາດທໍ | 5 | 14 | 49 | 169 | 218 | 4.626.000 |
| ຫົວພັນ | ຫາດຫຽ້ມ | 6 | 19 | 72 | 195 | 267 | 3.017.000 |
| | ພັນລໍ | 4 | 12 | 44 | 119 | 163 | 1.770.000 |
| | ຊ່ອນໃຕ້ | 5 | 16 | 69 | 172 | 241 | 1.446.000 |
| | ຊ່ອນເໜືອ | 8 | 25 | 98 | 282 | 380 | 2.268.000 |
| | ສາກົກ | 2 | 7 | 49 | 57 | 106 | 642.000 |
| | ລວມ | **43** | **130** | **504** | **1.395** | **1.899** | **25.961.000** |
| | ສະເລັ່ຍ ຕໍ່ ບ້ານ | | **3** | **12** | **32** | **44** | **603.744** |
| | ສະເລັ່ຍ ຕໍ່ ກຸ່ມ | | | **4** | **11** | **15** | **199.700** |

*<u>ແຫຼ່ງຂໍ້ມູນ</u>: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພຊະນາການ, ທລຍ, ກັນຍາ 2014*

*ແຫຼ່ງຂໍ້ມູນ: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພຊະນາການ, ຫລຍ, ກັນຍາ 2014*

*2.1). ການບໍລິຫານຄຸ້ມຄອງດ້ານການເງິນ*

ຮອດທ້າຍເດືອນ ກຸມພາ 2014, ມູນຄ່າການເບີກຈ່າຍສໍາລັບໂຄງການ ແມ່ນກວມເອົາ 31% ຂອງງົບປະມານທັງໝົດສໍາລັບ 4 ປີ (2011 - 2015). ເຖິງຢ່າງໃດກໍດີ, ສັງເກດເຫັນວ່າ ມູນຄ່າການເບີກຈ່າຍສໍາລັບສົ່ງເສີມກິດຈະກໍາສ້າງລາຍຮັບໂດຍກົງຂອງ ຄົວເຮືອນ ແມ່ນກວມເອົາພຽງ 8% ຂອງມູນຄ່າການໃຊ້ຈ່າຍທັງໝົດເທົ່ານັ້ນ. ກົງກັນຂ້າມ, ການເບີກຈ່າຍສໍາລັບຝຶກອົບຮົມ, ທີ່ປຶກສາ, ຈັດຊື້ອຸປະກອນ ແລະ ຄ່າບໍລິຫານ ແມ່ນກວມເອົາ 62% ແລະ 22% ຕາມລໍາດັບ (ຕາຕະລາງ 17).

**ຕາຕະລາງ17. ສະຫຼຸບຄ່າໃຊ້ຈ່າຍທັງໝົດຂອງໂຄງການ**

ຫົວໜ່ວຍ: ໂດລາສະຫະລັດ

| ລາຍການ | ງົບປະມານ ຄາດຄະເນ | ງົບປະມານທີ່ໄດ້ຮັບ | ມູນຄ່າໃຊ້ຈ່າຍທັງໝົດ ມາຮອດ 31 ທັນວາ 2013 | ດຸ່ນດ່ຽງ | % ເບີກຈ່າຍ |
|---|---|---|---|---|---|
| ອຸປະກອນ,ທີ່ປຶກສາ, ເຝິກອົບຮົມ | 1.101.500 | 1.061.752 | 680.629 | 420.871 | 62% |
| ຄ່າບໍລິຫານພາຍໃນ | 120.000 | | 26.266 | 93.734 | 22% |
| ກິດຈະກໍາ ຫຼື ໂຄງການ ຂອງ ຊຸມຊົນ | 1.400.000 | | 105.541 | 1.294.459 | 8% |
| **ລວມ:** | **2.621.500*** | **1.061.752** | **812.436** | **1.809.064** | **31%** |

*ແຫຼ່ງຂໍ້ມູນ: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພຊະນາການ, ຫລຍ, ກັນຍາ 2014*

3. ສັງເກດຕີລາຄາດ້ານດີ ແລະ ດ້ານອ່ອນ

3.1. ດ້ານດີ:

- ການນຳຈາກບັນດາກະຊວງທີ່ກ່ຽວຂ້ອງ ໂດຍສະເພາະ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ໄດ້ໃຫ້ການຮ່ວມມື ແລະ ໃຫ້ທິດຊີ້ນຳຢ່າງໃກ້ຊິດ ເຮັດໃຫ້ຜູ້ໃຫ້ທຶນມີຄວາມເຂົ້າໃຈ, ເຊື່ອໝັ້ນ ແລະ ພໍໃຈຕໍ່ຜົນການຈັດຕັ້ງປະຕິບັດວຽກງານ ຂອງ ທລຍ ໃນໄລຍະ 2 ປີຜ່ານມານີ້ເປັນຢ່າງດີ.
- ການຈັດຕັ້ງປະຕິບັດໂຄງການຍ່ອຍທັງໝົດ ແມ່ນມີສ່ວນຮ່ວມຈາກພໍ່ແມ່ປະຊາຊົນຢ່າງຕັ້ງໜ້າ ເຮັດໃຫ້ ທລຍ ສາມາດຈັດຕັ້ງປະຕິບັດໂຄງການສຳເລັດ ແລະ ໂຄງການທີ່ພໍ່ແມ່ປະຊາຊົນໄດ້ນຳໃຊ້ແລ້ວ ມີຈຳນວນຫຼາຍກວ່າ 90% ຂອງ ຈຳນວນທັງໝົດພາຍໃນ 3 ປີມານີ້. ສ່ວນ 10% ທີ່ຍັງບໍ່ທັນຈັດຕັ້ງປະຕິບັດສຳເລັດ ແມ່ນມີສາເຫດມາຈາກຄວາມຊັກຊ້າ ຂອງບໍລິສັດຮັບເໝົາ ແລະ ຜົນກະທົບຈາກໄພທຳມະຊາດ.

3.2. ດ້ານອ່ອນ:

- ການປະສານງານ ແລະ ຮ່ວມມືກັບອຳນາດການປົກຄອງທ້ອງຖິ່ນໃນລະດັບເມືອງ ແມ່ນຍັງເຮັດບໍ່ໄດ້ດີເທື່ອ, ລະດັບການເມືອງ ຂອງ ພະນັກງານ ທລຍ ຂັ້ນເມືອງເພື່ອໂນ້ມນ້າວອຳນາດການປົກຄອງໃຫ້ເຂົ້າໃຈຕໍ່ຮູບແບບຂອງ ທລຍ ກໍ່ຍັງຈຳກັດ ແລະ ອີກດ້ານໜຶ່ງ ອຳນາດການປົກຄອງຍັງບໍ່ເຂົ້າໃຈຕໍ່ລັກສະນະ ແລະ ຈຸດພິເສດ ຂອງ ໂຄງການ ທລຍ ເທື່ອ. ການແລກປ່ຽນຂໍ້ມູນລະຫວ່າງກັນ ກໍ່ຍັງບໍ່ທັນກວ້າງຂວາງ ແລະ ບໍ່ມີລັກສະນະຍຸດທະສາດເທື່ອ[3].
- ການປັບປຸງລະບົບຖານຂໍ້ມູນ ແລະ ລະບົບລາຍງານ ແມ່ນຍັງເຮັດບໍ່ໄດ້ດີ ຈຶ່ງເຮັດໃຫ້ການລາຍງານ ມີຄວາມຊັກຊ້າ.

[3] ຂໍ້ມູນລັກສະນະຍຸດທະສາດ ຄືຂໍ້ມູນທີ່ສາມາດໃຊ້ເປັນບ່ອນອີງໃນການກຳນົດຍຸດທະສາດ ເພື່ອຕັນຂະຫຍາຍນະໂຍບາຍຂອງ ຂັ້ນເທິງໄດ້ຢ່າງແທ້ຈິງ.

ເປັນທຶນສົບທົບຈາກລັດຖະບານເຮົາ. ສ່ວນ ໂຄງການພາຍໃຕ້ທຶນຕ່າງປະເທດ ແມ່ນຢູ່ໃນຂັ້ນຕອນກະກຽມສຳຫຼວດອອກແບບ (ໃນເດືອນກັນຍາ 2014).

- ຈັດຕັ້ງປະຕິບັດໂຄງການຍ່ອຍເພີ່ມທີ່ກ່ຽວກັບຫ້ອງນ້ຳ ແລະ ເພດານຂອງໂຮງຮຽນ ແລະ ສຸກສາລາ ເຊິ່ງເປັນແຫຼ່ງທຶນເພີ່ມ ຈາກ ອົງການພັດທະນາ ແລະ ການຮ່ວມມື ແຫ່ງປະເທດສະວິດເຊີແລນ ຈຳນວນ 436.000 ໂດລາສະຫະລັດ ໃຫ້ສຳເລັດຕາມຄາດໝາຍ.
- ຈັດຕັ້ງປະຕິບັດໂຄງການຍ່ອຍຈາກບ້ວງທຶນ ຂອງ ໂຄງການປັບປຸງຊີວິດການເປັນຢູ່ ຢູ່ເຂດເນີນສູງ ມີ 10 ໂຄງການທີ່ຈັດຕັ້ງຢູ່ແຂວງສາລະວັນ, ເຊກອງ ແລະ ອັດຕະປື ໃຫ້ສຳແລັດຕາມແຜນ.
- ຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍສົກປີ 2013-2014.
- ເລັ່ງໃສ່ຈັດຕັ້ງປະຕິບັດໂຄງການຍ່ອຍ ຂອງ ສົກປີ 2011-2012 ແລະ ສົກປີ 2012-2013 ທີ່ຍັງເຫຼືອໃຫ້ສຳເລັດ.

2. ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພຊະນາການ
    - ສືບຕໍ່ຂະຫຍາຍສ້າງຕັ້ງ ກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ແລະ ສູນໂພຊະນາການປະຈຳບ້ານ ໄປບັນດາເມືອງເປົ້າໝາຍໃຫ້ສຳເລັດ (ເບິ່ງເອກະສານຄັດຕິດ).

| ຜູ້ອຳນວຍການບໍລິຫານ ທລຍ | ຫົວໜ້າພະແນກຕິດຕາມ-ປະເມີນຜົນ | ສັງລວມ ແລະ ລາຍງານ |
|---|---|---|
| ---------------------- | ------------------------ | ---------------- |
| ບຸນກວ້າງ ສຸວັນນະພັນ | ທັດທະຈັນ ພົມພັນທະວົງ | ຈັນທະຄາດ ປະຖົມມະວົງ |